*Souphanouvong University Journal of Multidisciplinary Research and Development*
*2026, Vol. 12, [Fast Track], 87-93*
*https://doi.org/10.69692/SUJMRD12(Fast track)87*

# Comparative Advantage Analysis of Trade between the Lao PDR and Countries in the Greater Mekong Sub-region

**Chue XIONG[1], Bounthavy SIPHANTHONG[2] and Chansamone SENGDALA[3]**

*Department of Economics Faculty of Economics and Tourism Souphanouvong University, Lao PDR*

**Correspondence:*
*Chue XIONG, Viengkham District Office of Labour and Social Welfare, Tel: 020 92 963 339, E-mail: tswbxyooj007@gmail.com*

*[1]Department of Economics Faculty of Economics and Tourism Souphanouvong University*

***Article Info:***
***Submitted: March 02, 2026***
***Revised: March 20, 2026***
***Accepted: March 31, 2026***

**Abstract**

This study aims to: 1) analyze the trade situation between Lao PDR and the countries in the Mekong Subregion (GMS) and 2) evaluate the comparative advantage in trade using Vollrath's Relative Trade Advantage (RTA) index during the period 2020-2024. Using annual geographic data collected from Lao Trade Portal and ITC Trade Map at Level 2 product level and analyzed with descriptive statistics combined with RTA calculation for the main product categories with the highest total trade value of the top 5 of each trading partner.

The analysis results indicate that: the total trade value of Lao PDR with the sub-region below the Mekong River in the period 2020-2024 has a continuous increasing trend and there is a high concentration in the 3 main trading partners: Thailand, China and Vietnam. The export structure still focuses on resource-based goods and primary goods, while the import of industrial goods or capital goods also indicates that: Overall, Lao PDR is in a surplus state, but the growth rate of the overall trade balance has a declining trend. The RTA found that Lao PDR has advantages in energy products, agricultural products and some groups of minerals, but has disadvantages in some types of products that reflect limitations in standards, transformation and competitiveness.

**Keywords:** *Relative Trade Advantage, Greater Mekong Sub-region, Trade, Exports,Imports*

## 1. ພາກສະເໜີ

ໄລຍະຜ່ານມາເຫັນວ່າ ການຄ້າລະຫວ່າງປະເທດເປັນປັດໄຈຫຼັກທີ່ຊ່ວຍເພີ່ມອັດຕາການເຕີບໂຕທາງເສດຖະກິດ, ຂະຫຍາຍຕະຫຼາດການຜະລິດ, ສ້າງການຈ້າງງານ ແລະ ເພີ່ມຂີດຄວາມສາມາດໃນການແຂ່ງຂັນຂອງປະເທດ. ທ່າມກາງໂລກາພິວັດ ແລະ ການເຊື່ອມໂຍງຫ່ວງໂສ້ມູນຄ່າໂລກ (Global Value Chains: GVCs) ປະເທດຕ່າງໆຈຳເປັນຕ້ອງກຳນົດຍຸດທະສາດການຄ້າທີ່ສອດຄ່ອງກັບໂຄງສ້າງເສດຖະກິດ ແລະ ສັກກະຍະພາບພາຍໃນປະເທດຕົນ ເພື່ອເຮັດໃຫ້ຕົນເອງໄດ້ຮັບປະໂຫຍດສູງສຸດຈາກການເປີດກວ້າງການຄ້າ (UNCTAD, 2013; WTO, 2014).

ສຳລັບ ສປປ ລາວ ໃນຖານະທີ່ເປັນປະເທດທີ່ບໍ່ມີຊາຍແດນຕິດທະເລ (Landlocked Country) ໄດ້ເຮັດໃຫ້ປະເທດປະເຊີນກັບສິ່ງທ້າທາຍດ້ານຕົ້ນທຶນການຂົນສົ່ງ ແລະ ມີຂໍ້ຈຳກັດໃນການເຂົ້າເຖິງຕະຫຼາດພາຍນອກ. ແນວໃດກໍຕາມ, ນັບແຕ່ການປະຕິຮູບເສດຖະກິດໃນປີ 1986 ເປັນຕົ້ນມາ, ລັດຖະບານໄດ້ຫັນປ່ຽນຂໍ້ເສຍປຽບດ້ານພູມສັນຖານໃຫ້ກາຍເປັນໂອກາດ ໂດຍຜ່ານຍຸດທະສາດການຫັນປ່ຽນຈາກປະເທດທີ່ບໍ່ມີທາງອອກສູ່ທະເລ ໃຫ້ກາຍເປັນປະເທດເຊື່ອມໂຍງ-ເຊື່ອມຈອດ (Land-linked Country) (MPI, 2021). ການເຂົ້າຮ່ວມກອບຄວາມຮ່ວມມືທີ່ສຳຄັນ ເຊັ່ນ: ອາຊຽນ (ASEAN), ອົງການການຄ້າໂລກ (WTO) ແລະ ຄວາມຕົກລົງຄູ່ຮ່ວມເສດຖະກິດຮອບດ້ານພາກພື້ນ (RCEP) ບໍ່ພຽງແຕ່ຊ່ວຍປັບປຸງກົດລະບຽບ ແລະ ການອຳນວຍຄວາມສະດວກດ້ານການຄ້າ, ແຕ່ຍັງເປັນການເປີດປະຕູສູ່ການຖ່າຍໂອນເຕັກໂນໂລຊີ. ນອກຈາກນີ້, ການຮ່ວມມືພາຍໃຕ້ ຍຸດທະສາດການຮ່ວມມືທາງເສດຖະກິດ ອີຣາວະດີ-ເຈົ້າພະຍາ-ແມ່ນ້ຳຂອງ

*Copyright © 2026 by the Authors. Published by Souphanouvong University. This is an open access article under the CC BY-NC-ND license (http://creativecommons.org/licenses/by-nc-nd/4.0/*

(ACMECS) ແລະ ຂໍ້ລິເລີ່ມ ໜຶ່ງແລວ ໜຶ່ງເສັ້ນທາງ (BRI) ໂດຍສະເພາະ ຜ່ານເສັ້ນທາງລົດໄຟ ລາວ-ຈີນ, ໄດ້ກາຍເປັນປັດໄຈເລັ່ງທີ່ສຳຄັນໃນການເຊື່ອມໂຍງຫ່ວງໂສ້ມູນຄ່າກັບບັນດາປະເທດໃນ GMS ແລະ ສາກົນ ເພື່ອຊ່ວຍຍົກລະດັບຄວາມສາມາດການຜະລິດພາຍໃນໃຫ້ທຽບເທົ່າກັບສາກົນ (World Bank, 2020).

ໃນລະດັບພາກພື້ນ, ອະນຸພາກພື້ນລຸ່ມແມ່ນ້ຳຂອງ (GMS) ຖືເປັນກອບຄວາມຮ່ວມມືທີ່ມີບົດບາດສຳຄັນທີ່ສຸດຕໍ່ ສປປ ລາວ. ຍ້ອນຄວາມໃກ້ຊິດທາງດ້ານພູມສັນຖານ ແລະ ການເປັນຈຸດເຊື່ອມຕໍ່ທາງບົກລະຫວ່າງບັນດາປະເທດສະມາຊິກ ເຮັດໃຫ້ອະນຸພາກພື້ນລຸ່ມແມ່ນ້ຳຂອງກາຍເປັນຕະຫຼາດສົ່ງອອກ ແລະ ຄູ່ຄ້າທີ່ສຳຄັນອັນດັບໜຶ່ງຂອງ ສປປ ລາວ (Lao Trade Portal, 2024). ໃນໄລຍະຜ່ານມາ, ໂຄງສ້າງການຄ້າລະຫວ່າງ ສປປ ລາວ ແລະ ອະນຸພາກພື້ນລຸ່ມແມ່ນ້ຳຂອງ ຍັງສຸມໃສ່ການສົ່ງອອກສິນຄ້າທີ່ອີງໃສ່ຊັບພະຍາກອນທຳມະຊາດ ແລະ ພະລັງງານເປັນຫຼັກ, ໃນທາງກົງກັນຂ້າມ, ໂຄງສ້າງການນຳເຂົ້າສ່ວນໃຫຍ່ແມ່ນສຸມໃສ່ ສິນຄ້າທຶນ ແລະ ສິນຄ້າເຄິ່ງສຳເລັດຮູບ ເຊິ່ງເປັນປັດໄຈພື້ນຖານທີ່ສຳຄັນໃນການຂັບເຄື່ອນຂະແໜງການຜະລິດ ແລະ ການລົງທຶນພາຍໃນປະເທດ (ADB, 2022). ສະພາບການດັ່ງກ່າວ ສະທ້ອນໃຫ້ເຫັນທັງໂອກາດໃນການສ້າງລາຍຮັບ ແລະ ຄວາມສ່ຽງຈາກຄວາມຜັນຜວນຂອງລາຄາໃນຕະຫຼາດໂລກ. ດັ່ງນັ້ນ, ການທຳຄວາມເຂົ້າໃຈກ່ຽວກັບສະພາບການຄ້າ ແລະ ຄວາມໄດ້ປຽບຂອງ ສປປ ລາວ ໃນກອບອະນຸພາກພື້ນລຸ່ມແມ່ນ້ຳຂອງ ຈຶ່ງມີຄວາມຈຳເປັນຕໍ່ການກຳນົດນະໂຍບາຍການຄ້າ ແລະ ການພັດທະນາອຸດສາຫະກຳຢ່າງມີເປົ້າໝາຍ.

ຕາມທິດສະດີການຄ້າສາກົນ ໂດຍສະເພາະ ແນວຄິດຄວາມໄດ້ປຽບໂດຍປຽບທຽບຂອງ Ricardo (1817) ໄດ້ອະທິບາຍວ່າ: ປະເທດຄວນເນັ້ນໃນການຜະລິດ ແລະ ສົ່ງອອກສິນຄ້າທີ່ຕົນມີຕົ້ນທຶນໂອກາດຕໍ່າ ຫຼື ມີປະສິດທິພາບສູງກວ່າຄູ່ແຂ່ງ ເພື່ອໃຫ້ເກີດການຈັດສັນຊັບພະຍາກອນຢ່າງມີປະສິດທິຜົນ ແລະ ສ້າງຜົນປະໂຫຍດຮ່ວມກັນຈາກການຄ້າ. ແນວໃດກໍຕາມ ການວັດແທກຄວາມໄດ້ປຽບໂດຍປຽບທຽບໃນທາງປະຕິບັດ ບໍ່ສາມາດຄຳນວນຕົ້ນທຶນໂອກາດໂດຍກົງໄດ້ ເພາະຂໍ້ມູນຈຳກັດ. ດັ່ງນັ້ນ ນັກເສດຖະສາດຈຶ່ງໄດ້ພັດທະນາດັດຊະນີທີ່ໃຊ້ຂໍ້ມູນການຄ້າຈິງ ເພື່ອເປີດເຜີຍຄວາມໄດ້ປຽບດັ່ງກ່າວ. ໃນບັນດາດັດຊະນີເຫຼົ່ານັ້ນ ເຫັນວ່າດັດຊະນີ Relative Trade Advantage (RTA) ຂອງ Vollrath (1991) ເປັນແນວທາງທີ່ໂດດເດັ່ນ ເນື່ອງຈາກພິຈາລະນາຮ່ວມກັນທັງດ້ານການສົ່ງອອກ ແລະ ການນຳເຂົ້າ ເຮັດໃຫ້ການອະທິບາຍສະຖານະຄວາມໄດ້ປຽບທາງການຄ້າມີຄວາມຮອບດ້ານກວ່າການພິຈາລະນາດ້ານສົ່ງອອກພຽງດ້ານດຽວ. ໂດຍຫຼັກການ, ຄ່າ RTA ເປັນບວກ ສະທ້ອນເຖິງຄວາມໄດ້ປຽບທາງການຄ້າ ໃນທາງກົງກັນຂ້າມກໍລະນີຄ່າ RTA ຕິດລົບ ບົ່ງຊີ້ເຖິງຄວາມເສຍປຽບ.

ເຖິງແມ່ນວ່າໃນໄລຍະຜ່ານມາຈະມີຫຼາຍງານວິໄຈ ແລະ ການສຶກສາທີ່ວິເຄາະການຄ້າຂອງ ສປປ ລາວ ໃນຫຼາຍມຸມມອງ, ແຕ່ການສຶກສາທີ່ວິເຄາະຄວບຄູ່ກັນລະຫວ່າງ ສະພາບການຄ້າຂອງ ສປປ ລາວ ກັບປະເທດໃນອະນຸພາກພື້ນລຸ່ມແມ່ນ້ຳຂອງ ແລະ ການປະເມີນຄວາມໄດ້ປຽບທາງການຄ້າ ໃນບັນດາສິນຄ້າດ້ວຍດັດຊະນີທີ່ພິຈາລະນາຮ່ວມທັງການສົ່ງອອກ ແລະ ນຳເຂົ້າ (RTA) ຍັງບໍ່ຫຼາຍ. ນີ້ເປັນຊ່ອງຫວ່າງທາງວິຊາການທີ່ຄວນໄດ້ຮັບການເຕີມເຕັມ ເພາະການວິເຄາະດ້ວຍວິທີດັ່ງກ່າວສາມາດຊ່ວຍລະບຸ ສິນຄ້າທີ່ມີຈຸດແຂງທີ່ຄວນສົ່ງເສີມຕໍ່ເນື່ອງ, ສິນຄ້າທີ່ອ່ອນໄຫວທີ່ຄວນຍົກລະດັບປະສິດທິພາບ ຫຼື ຄຸນນະພາບ ແລະ ສິນຄ້າທີ່ຄວນປັບໂຄງສ້າງ ເພື່ອຫຼຸດຄວາມສ່ຽງຈາກການເພິ່ງພາສິນຄ້າ ຫຼື ຕະຫຼາດທີ່ຈຳກັດ. ດັ່ງນັ້ນ, ການວິເຄາະຄວາມໄດ້ປຽບໂດຍປຽບທຽບທາງດ້ານການຄ້າລະຫວ່າງ ສປປ ລາວ ກັບອະນຸພາກພື້ນລຸ່ມແມ່ນ້ຳຂອງໃນຄັ້ງນີ້ ຈຶ່ງມີຄວາມສຳຄັນຢ່າງຍິ່ງໃນການສ້າງ ພື້ນຖານຂໍ້ມູນທີ່ມີຫຼັກຖານຢັ້ງຢືນຕົວຈິງ ສຳລັບການວາງແຜນນະໂຍບາຍເສດຖະກິດໃນອະນາຄົດ.

ດັ່ງນັ້ນ, ການສຶກສານີ້ຈຶ່ງມີ 2 ຈຸດປະສົງຫຼັກ ຄື: 1) ວິເຄາະສະພາບການຄ້າລະຫວ່າງ ສປປ ລາວ ແລະ ປະເມີນຄວາມໄດ້ປຽບໂດຍປຽບທຽບທາງດ້ານການຄ້າ ລະຫວ່າງ ສປປ ລາວ ກັບ ບັນດາປະເທດໃນອະນຸພາກພື້ນລຸ່ມແມ່ນ້ຳຂອງ (GMS) ໃນຊ່ວງປີ 2020–2024 ໂດຍພິຈາລະນາ 4 ອົງປະກອບ: ມູນຄ່າການຄ້າ, ການສົ່ງອອກ, ການນຳເຂົ້າ ແລະ ດຸນການຄ້າ; 2) ວິເຄາະຄວາມໄດ້ປຽບໂດຍປຽບທຽບທາງດ້ານການຄ້າ ລະຫວ່າງ ສປປ ລາວ ກັບບັນດາປະເທດຄູ່ຄ້າໃນ GMS ໂດຍນຳໃຊ້ດັດຊະນີ Relative Trade Advantage (RTA) ເພື່ອຊີ້ໃຫ້ເຫັນບົດບາດສິນຄ້າທີ່ຄວນສົ່ງເສີມ ແລະ ສິນຄ້າທີ່ຄວນປັບປຸງຍົກລະດັບ.

## 2. ອຸປະກອນ ແລະ ວິທີການ

2.1 ກຸ່ມເປົ້າໝາຍ

ການສຶກສາໃນຄັ້ງນີ້ ມຸ່ງເນັ້ນບັນດາປະເທດຄູ່ຄ້າໃນອະນຸພາກພື້ນລຸ່ມແມ່ນ້ຳຂອງ ເຊິ່ງປະກອບມີ ສປປ ລາວ, ສປ ຈີນ, ໄທ, ສສ ຫວຽດນາມ, ກຳປູເຈຍ ແລະ ມຽນມາ. ໂດຍສຶກສາສະເພາະໃນດ້ານການຄ້າສິນຄ້າເທົ່ານັ້ນ ບໍ່ຄວບຄຸມດ້ານການບໍລິການ.

2.2 ເຄື່ອງມືທີ່ໃຊ້ໃນການວິໄຈ

ການສຶກສານີ້ໄດ້ນຳໃຊ້ວິທີວິໄຈແບບປະລິມານ ໂດຍນຳໃຊ້ໂປຼແກຼມ ເພື່ອຄຳນວນຄ່າທາງສະຖິຕິ ເຊັ່ນ: ອັດຕາສ່ວນຮ້ອຍ, ອັດຕາສ່ວນຮ້ອຍປ່ຽນແປງ, ມູນຄ່າການຄ້າ, ດຸນການຄ້າ ແລະ ຄ່າດັດຊະນີຄວາມໄດ້ປຽບໂດຍປຽບທຽບທາງດ້ານການຄ້າ.

2.3 ການຮວບຮວມຂໍ້ມູນ

ການສຶກສານີ້ນຳໃຊ້ຂໍ້ມູນທຸຕິຍະພູມເປັນຫຼັກ ໂດຍເປັນຂໍ້ມູນອະນຸກົມເວລາແບບລາຍປີ ໃນຊ່ວງປີ 2020–2024. ຂໍ້ມູນທີ່ນຳໃຊ້ເຂົ້າ

ໃນການວິເຄາະປະກອບມີ ມູນຄ່າການຄ້າ, ມູນຄ່າການສົ່ງອອກ, ມູນຄ່າການນໍາເຂົ້າ ແລະ ດຸນການຄ້າ ລະຫວ່າງ ສປປ ລາວ ກັບປະເທດຄູ່ຄ້າໃນອະນຸພາກພື້ນລຸ່ມແມ່ນໍ້າຂອງ ໄດ້ແກ່: ສປປ ລາວ, ສປ ຈີນ, ໄທ, ສສ ຫວຽດນາມ, ມຽນມາ ແລະ ກໍາປູເຈຍ ໂດຍແຫຼ່ງຂໍ້ມູນທັງໝົດເປັນຂໍ້ມູນ Level 2 ຂອງສະຖິຕິ E-stat ທີ່ຮວບຮວມຜ່ານເວັບໄຊລະບົບສະຖິຕິການຄ້າຕ່າງປະເທດ ຜ່ານເວັບໄຊ Lao Trade Portal ແລະ ຖານຂໍ້ມູນ Trade Map ຂອງ International Trade Centre (ITC). ພາຍຫຼັງຮວບຮວມຂໍ້ມູນໄດ້ແລ້ວ ຜູ້ສຶກສາຈະຂໍ້ມູນມາກວດສອບເບິ່ງຄວາມຖືກຕ້ອງ, ປັບມູນຄ່າໃຫ້ເປັນສະກຸນເງິນດຽວກັນ (USD) ແລະ ຈັດລຽງກຸ່ມສິນຄ້າຕາມໂຄງສ້າງການຜະລິດ ຄື: ສິນຄ້າກະສິກໍາ, ສິນຄ້າອຸດສາຫະກໍາ, ພະລັງງານ ແລະ ແຮ່ທາດ ເພື່ອນໍາໄປວິເຄາະທາງສະຖິຕິໃນຂັ້ນຕອນຕໍ່ໄປ.

2.4 ການວິເຄາະຂໍ້ມູນ

ໃນສ່ວນນີ້ ຄະນະຜູ້ວິໄຈຈະນໍາໃຊ້ສະຖິຕິພັນລະນາ (Descriptive Statistics) ເພື່ອມຸ່ງເນັ້ນການວິເຄາະມູນຄ່າ, ສັດສ່ວນ ແລະ ອັດຕາສ່ວນປ່ຽນແປງ ເພື່ອວິເຄາະສະພາບການຄ້າລະຫວ່າງ ສປປ ລາວ ກັບບັນດາປະເທດຄູ່ຄ້າໃນອະນຸພາກພື້ນລຸ່ມແມ່ນໍ້າຂອງ; ສ່ວນການວິເຄາະຄວາມໄດ້ປຽບໂດຍປຽບທຽບທາງດ້ານການຄ້າ ຜູ້ສຶກສາຈະໄດ້ນໍາໃຊ້ດັດຊະນີຄວາມໄດ້ປຽບໂດຍປຽບທຽບທາງການຄ້າ (Relative Trade Advantage: RTA) (Vollrath, 1991) ເຂົ້າຊ່ວຍໃນການວິເຄາະຂໍ້ມູນ.

## 3. ຜົນໄດ້ຮັບ

### 3.1 ສະພາບການຄ້າລະຫວ່າງ ສປປ ລາວ ກັບປະເທດໃນອະນຸພາກພື້ນລຸ່ມແມ່ນໍ້າຂອງ ແຕ່ປີ 2020–2024

ສໍາລັບຜົນການວິເຄາະສະພາບການຄ້າລະຫວ່າງ ສປປ ລາວ ກັບ ປະເທດໃນອະນຸພາກພື້ນລຸ່ມແມ່ນໍ້າຂອງ ຈະປະກອບມີ 4 ດ້ານ ຄື: ການຄ້າ, ການສົ່ງອອກ, ການນໍາເຂົ້າ ແລະ ດຸນການຄ້າ ເຊິ່ງມີລາຍລະອຽດດັ່ງລຸ່ມນີ້:

ຜົນການວິເຄາະສະແດງວ່າ: ມູນຄ່າການຄ້າລວມລະຫວ່າງ ສປປ ລາວ ກັບ 5 ປະເທດໃນອະນຸພາກພື້ນລຸ່ມແມ່ນໍ້າຂອງ (GMS) ໃນຊ່ວງປີ 2020–2024 ມີມູນຄ່າລວມ 61,518.60 ລ້ານໂດລາ ແລະ ມີທ່າອ່ຽງເພີ່ມຂຶ້ນຢ່າງຕໍ່ເນື່ອງ ຈາກ 9,579.24 ລ້ານໂດລາ ໃນປີ 2020 ເປັນ 15,710.51 ລ້ານໂດລາ ໃນປີ 2024. ເມື່ອພິຈາລະນາຕາມສັດສ່ວນຄູ່ຄ້າ ພົບວ່າ: ໄທ ເປັນຄູ່ຄ້າຫຼັກ ໂດຍກວມ 49.18% (30,254.38 ລ້ານໂດລາ) ຮອງລົງມາແມ່ນ ສປ ຈີນ 33.85% (20,821.52 ລ້ານໂດລາ) ແລະ ສສ ຫວຽດນາມ 15.39% (9,465.85 ລ້ານໂດລາ). ໃນຂະນະທີ່ ກໍາປູເຈຍ ແລະ ມຽນມາ ມີສັດສ່ວນຄ່ອນຂ້າງຕໍ່າ ໂດຍກວມພຽງ 1.46% (900.96 ລ້ານໂດລາ) ແລະ 0.12% (75.89 ລ້ານໂດລາ) ຕາມລໍາດັບ. ພ້ອມນັ້ນ ມູນຄ່າການຄ້າລວມຂະຫຍາຍຕົວສະເລ່ຍ 13.26% ຕໍ່ປີ ໂດຍປີ 2024 ເປັນປີທີ່ມີອັດຕາເພີ່ມຂຶ້ນສູງສຸດ 20.12%. ເມື່ອແຍກພິຈາລະນາລາຍປະເທດ ພົບວ່າ: ມຽນມາ ມີອັດຕາເຕີບໂຕສະເລ່ຍ 114.37% (ເນື່ອງຈາກຖານການຄ້າຕໍ່າ), ຮອງລົງມາແມ່ນ ສສ ຫວຽດນາມ 21.04%, ສປ ຈີນ 20.05%, ກໍາປູເຈຍ 19.13% (ຖານການຄ້າຕໍ່າ) ແລະ ໄທ 7.17%.

ສໍາລັບການສົ່ງອອກ ພົບວ່າ: ມູນຄ່າສົ່ງອອກລວມຂອງ ສປປ ລາວ ໄປຍັງປະເທດໃນອະນຸພາກພື້ນລຸ່ມແມ່ນໍ້າຂອງ ໃນຊ່ວງປີ 2020–2024 ມີທັງໝົດ 33,900.14 ລ້ານໂດລາ ແລະ ມີທ່າອ່ຽງເພີ່ມຂຶ້ນຕໍ່ເນື່ອງ ຈາກ 5,370.17 ລ້ານໂດລາ ໃນປີ 2020 ເປັນ 8,411.25 ລ້ານໂດລາ ໃນປີ 2024. ເມື່ອພິຈາລະນາຕາມຄູ່ຄ້າ ພົບວ່າ: ໄທ ເປັນຕະຫຼາດສົ່ງອອກຫຼັກ ກວມ 43.26% (14,664.71 ລ້ານໂດລາ), ຮອງລົງມາແມ່ນ ສປ ຈີນ 32.89% (11,149.95 ລ້ານໂດລາ) ແລະ ສສ ຫວຽດນາມ 21.15% (7,169.68 ລ້ານໂດລາ). ໃນຂະນະທີ່ ກໍາປູເຈຍ ແລະ ມຽນມາ ມີສັດສ່ວນຄ່ອນຂ້າງໜ້ອຍ ໂດຍກວມພຽງ 2.59% (878.66 ລ້ານໂດລາ) ແລະ 0.11% (37.15 ລ້ານໂດລາ) ຕາມລໍາດັບ. ດ້ານອັດຕາການເຕີບໂຕ ການສົ່ງອອກລວມເຕີບໂຕສະເລ່ຍ 12.13% ຕໍ່ປີ ໂດຍປີ 2024 ມີອັດຕາເພີ່ມຂຶ້ນສູງສຸດ 20.31%. ເມື່ອແຍກລາຍປະເທດ ພົບວ່າ: ມຽນມາ ເຕີບໂຕສະເລ່ຍ 83.14% (ຖານການຄ້າຕໍ່າ), ສສ ຫວຽດນາມ 21.31%, ກໍາປູເຈຍ 18.17% (ຖານການຄ້າຕໍ່າ), ສປ ຈີນ 18.17% ແລະ ໄທ 4.99%. ເມື່ອພິຈາລະນາຕາມໂຄງສ້າງສິນຄ້າ ພົບວ່າ: ການສົ່ງອອກຂອງ ສປປ ລາວ ຍັງຄົງເພິ່ງພາສິນຄ້າທີ່ອີງໃສ່ຊັບພະຍາກອນເປັນຫຼັກ ແລະ ສິນຄ້າຂັ້ນຕົ້ນເປັນສ່ວນໃຫຍ່. ໂດຍກຸ່ມສິນຄ້າພະລັງງານມີມູນຄ່າສູງສຸດ 11,684.91 ລ້ານໂດລາ ກວມ 34.47% ຂອງມູນຄ່າສົ່ງອອກທັງໝົດ (ໂດຍມີໄຟຟ້າເປັນສິນຄ້າຫຼັກ), ຮອງລົງມາແມ່ນ ສິນຄ້າອຸດສາຫະກໍາ 9,781.59 ລ້ານໂດລາ (28.85%), ສິນຄ້າກະສິກໍາ 6,509.53 ລ້ານໂດລາ (19.20%) ແລະ ແຮ່ທາດ 5,924.11 ລ້ານໂດລາ (17.48%) ຕາມລໍາດັບ.

ດ້ານການນໍາເຂົ້າ ພົບວ່າ: ມູນຄ່ານໍາເຂົ້າລວມຂອງ ສປປ ລາວ ຈາກປະເທດໃນອະນຸພາກພື້ນລຸ່ມແມ່ນໍ້າຂອງ ໃນຊ່ວງປີ 2020–2024 ມີທັງໝົດ 27,618.46 ລ້ານໂດລາ ແລະ ມີທ່າອ່ຽງເພີ່ມຂຶ້ນຕໍ່ເນື່ອງ ຈາກ 4,209.07 ລ້ານໂດລາ ໃນປີ 2020 ເປັນ 7,299.26 ລ້ານໂດລາ ໃນປີ 2024. ເມື່ອພິຈາລະນາຕາມຄູ່ຄ້າ ພົບວ່າ: ໄທ ເປັນແຫຼ່ງນໍາເຂົ້າຫຼັກ ກວມ 56.45% (15,589.66 ລ້ານໂດລາ) ຮອງລົງມາແມ່ນ ສປ ຈີນ 35.02% (9,671.57 ລ້ານໂດລາ) ແລະ ສສ ຫວຽດນາມ 8.31%. ໃນຂະນະທີ່ ມຽນມາ ແລະ ກໍາປູເຈຍ ມີສັດສ່ວນຕໍ່າຫຼາຍ ໂດຍກວມພຽງ 0.14% (38.75 ລ້ານໂດລາ) ແລະ 0.08% (22.30 ລ້ານໂດລາ) ຕາມລໍາດັບ. ສໍາລັບອັດຕາການເຕີບໂຕ ການນໍາເຂົ້າລວມເຕີບໂຕສະເລ່ຍ 14.84% ຕໍ່ປີ ໂດຍປີ 2024 ເປັນປີທີ່ເພີ່ມຂຶ້ນສູງສຸດ 19.89%. ເມື່ອແຍກລາຍປະເທດ ພົບວ່າ: ມຽນມາ ເຕີບໂຕສະເລ່ຍ

469.14% (ຖານຕໍ່າ), ກໍາປູເຈຍ 122.55% (ຖານຕໍ່າ), ສປ ຈີນ 23.97%, ສສ ຫວຽດນາມ 22.90% ແລະ ໄທ 9.57%. ເມື່ອເບິ່ງຕາມໂຄງສ້າງສິນຄ້ານໍາເຂົ້າ ພົບວ່າ: ສິນຄ້າອຸດສາຫະກໍາເປັນກຸ່ມຫຼັກດ້ວຍມູນຄ່າ 19,058.26 ລ້ານໂດລາ ກວມ 69.01% ຂອງມູນຄ່ານໍາເຂົ້າທັງໝົດ (ໂດຍມີ ອຸປະກອນກົນຈັກ, ພາຫະນະ, ເຫຼັກ–ເຫຼັກກ້າ, ເຄື່ອງໄຟຟ້າ, ພລາສະຕິກ, ສາຍໄຟ ແລະ ຊິ້ນສ່ວນລົດ ເປັນສິນຄ້ານໍາເຂົ້າຫຼັກ). ຮອງລົງມາແມ່ນ ພະລັງງານ 5,717.18 ລ້ານໂດລາ (20.70%), ສິນຄ້າກະສິກໍາ 2,604.93 ລ້ານໂດລາ (9.43%) ແລະ ແຮ່ທາດ 238.10 ລ້ານໂດລາ (0.86%) ຕາມລໍາດັບ.

ກ່ຽວກັບດຸນການຄ້າ ພົບວ່າ: ລະຫວ່າງປີ 2020–2024 ດຸນການຄ້າຂອງ ສປປ ລາວ ກັບປະເທດໃນອະນຸພາກພື້ນລຸ່ມແມ່ນໍ້າຂອງ ໂດຍລວມຢູ່ໃນສະຖານະເກີນດຸນ ໂດຍມີມູນຄ່າເກີນດຸນລວມ 6,281.69 ລ້ານໂດລາ. ແຕ່ຢ່າງໃດກໍຕາມ ດຸນການຄ້າມີຄວາມຜັນຜວນຄ່ອນຂ້າງສູງ ແລະ ບໍ່ມີທິດທາງປ່ຽນແປງທີ່ແນ່ນອນ ໂດຍອັດຕາການເຕີບໂຕຂອງດຸນການຂະຫຍາຍຕົວສະເລ່ຍ 5.13% ຕໍ່ປີ. ເມື່ອພິຈາລະນາຕາມປະເທດຄູ່ຄ້າ ພົບວ່າ: ສປປ ລາວ ເກີນດຸນການຄ້າກັບ ສສ ຫວຽດນາມ ຫຼາຍທີ່ສຸດ 4,873.51 ລ້ານໂດລາ (77.58%), ຮອງລົງມາແມ່ນ ເກີນດຸນກັບ ສປ ຈີນ 1,478.37 ລ້ານໂດລາ ແລະ ເກີນດຸນກັບ ກໍາປູເຈຍ 856.36 ລ້ານໂດລາ. ໃນຂະນະດຽວກັນ ພົບວ່າ: ຂາດດຸນການຄ້າກັບ ໄທ ມູນຄ່າ -924.95 ລ້ານໂດລາ ແລະ ຂາດດຸນກັບ ມຽນມາ ມູນຄ່າ -1.60 ລ້ານໂດລາ.

### 3.2 ວິເຄາະຄວາມໄດ້ປຽບໂດຍປຽບທຽບ ທາງດ້ານການຄ້າ ລະຫວ່າງ ສປປ ລາວ ກັບ ບັນດາປະເທດໃນອະນຸພາກພື້ນລຸ່ມແມ່ນໍ້າຂອງ

ຜົນການປະເມີນດັດຊະນີຄວາມໄດ້ປຽບໂດຍປຽບທຽບທາງດ້ານການຄ້າ (RTA) ລະຫວ່າງ ສປປ ລາວ ກັບ ຄູ່ຄ້າໃນອະນຸພາກພື້ນລຸ່ມແມ່ນໍ້າຂອງ ໃນລະຫວ່າງປີ 2020-2024 ໂດຍຄໍານວນດັດຊະນີຄວາມໄດ້ປຽບໂດຍປຽບທຽບທາງດ້ານການຄ້າ ສໍາລັບລາຍການສິນຄ້າທີ່ມີມູນຄ່າການຄ້າລວມລະຫວ່າງແຕ່ລະຄູ່ຄ້າ ແຕ່ປີ 2020-2024 ສູງສຸດ 5 ອັນດັບທໍາອິດ ແລະ ມີຄວາມຕໍ່ເນື່ອງ ເຊິ່ງຜົນການປະເມີນ ພົບວ່າ:

- ສປປ ລາວ ມີຄວາມໄດ້ປຽບທາງການຄ້າໂດຍປຽບທຽບທາງດ້ານການຄ້າ ສປ ຈີນ ໃນ 4 ໝວດສິນຄ້າ ຄື: 00037 ແຮ່ທອງ, 00229 ໝາກກ້ວຍ, 00059 ຢາງພາລາ ແລະ 00020 ແປ້ງມັນຕົ້ນ ເຊິ່ງມີຄ່າດັດສະນີເທົ່າກັບ 40.56, 93.13, 29.47 ແລະ 9.33 ຕາມລໍາດັບ. ໃນທາງກົງກັນຂ້າມ, ສປປ ລາວ ຍັງມີຄວາມເສຍປຽບໂດຍປຽບທຽບທາງດ້ານການຄ້າ ໃນໝວດສິນຄ້າ 00070 ເຍື່ອໄມ້ ແລະ ເສດເຈ້ຍ ໂດຍມີຄ່າດັດສະນີເທົ່າກັບ -11.01.

- ສປປ ລາວ ມີຄວາມໄດ້ປຽບທາງການຄ້າໂດຍປຽບທຽບທາງດ້ານການຄ້າ ໄທ ໃນ 4 ໝວດສິນຄ້າ ຄື: 00045 ໄຟຟ້າ, 00231 ມັນຕົ້ນ, 00238 ຊີມັງ, 00097 ທອງແດງ ແລະ ເຄື່ອງທີ່ເຮັດດ້ວຍທອງແດງ ເຊິ່ງມີຄ່າດັດສະນີເທົ່າກັບ 50.09, 94.53, 83.97 ແລະ 1.55 ຕາມລໍາດັບ. ໃນທາງກົງກັນຂ້າມ, ສປປ ລາວ ຍັງມີຄວາມເສຍປຽບໂດຍປຽບທຽບທາງດ້ານການຄ້າ ໃນໝວດສິນຄ້າ 00013 ກາເຟ ບໍ່ທັນໄດ້ປຸງແຕ່ງ ໂດຍມີຄ່າດັດສະນີເທົ່າກັບ -22.88.

- ສປປ ລາວ ມີຄວາມໄດ້ປຽບທາງການຄ້າໂດຍປຽບທຽບທາງດ້ານການຄ້າ ສສ ຫວຽດນາມ ທັງ 5 ໝວດສິນຄ້າທີ່ນໍາມາສຶກສາ ຄື: 00032 ເຄື່ອງດື່ມ, 00059 ຢາງພາລາ, 00027 ນໍ້າຕານ, 00045 ໄຟຟ້າ ແລະ 00038 ແຮ່ເຫຼັກ ເຊິ່ງມີຄ່າດັດສະນີເທົ່າກັບ 64.58, 33.14, 62.14, 99.26 ແລະ 9.37 ຕາມລໍາດັບ.

- ສປປ ລາວ ມີຄວາມໄດ້ປຽບທາງການຄ້າໂດຍປຽບທຽບທາງດ້ານການຄ້າ ມຽນມາ ທັງ 5 ໝວດສິນຄ້າທີ່ນໍາມາສຶກສາ ຄື: 00045 ໄຟຟ້າ, 00109 ພາຫະນະທາງບົກ ແລະ ຊິ້ນສ່ວນອາໄຫຼ່, 00095 ເຫຼັກ ແລະ ເຫຼັກກ້າ, 00034 ຢາສູບ ແລະ 00245 ເຫຼົ້າ-ເບຍ ເຊິ່ງມີຄ່າດັດສະນີເທົ່າກັບ 281.94, 5.06, 0.12, 24.81 ແລະ 241.57 ຕາມລໍາດັບ.

- ສປປ ລາວ ມີຄວາມໄດ້ປຽບທາງການຄ້າໂດຍປຽບທຽບທາງດ້ານການຄ້າ ກໍາປູເຈຍ ໃນ 3 ໝວດສິນຄ້າ ຄື: 00045 ໄຟຟ້າ, 00013 ກາເຟ ບໍ່ທັນໄດ້ປຸງແຕ່ງ ແລະ 00095 ເຫຼັກ ແລະ ເຫຼັກກ້າ ເຊິ່ງມີຄ່າດັດສະນີເທົ່າກັບ 87.39, 78.86 ແລະ 0.18 ຕາມລໍາດັບ, ໃນທາງກົງກັນຂ້າມ, ສປປ ລາວ ຍັງມີຄວາມເສຍປຽບໂດຍປຽບທຽບທາງດ້ານການຄ້າ ໃນໝວດສິນຄ້າ ໃນ 2 ໝວດສິນຄ້າ ຄື: 00032 ເຄື່ອງດື່ມ ແລະ 00106 ອຸປະກອນກົນຈັກ ແລະ ສ່ວນປະກອບ ໂດຍມີຄ່າດັດສະນີເທົ່າກັບ -2,218.26 ແລະ -18.61 ຕາມລໍາດັບ.

## 4. ການວິພາກຜົນ

### 4.1 ສະພາບການຄ້າລະຫວ່າງ ສປປ ລາວ ກັບປະເທດໃນອະນຸພາກພື້ນລຸ່ມແມ່ນໍ້າຂອງ ແຕ່ປີ 2020–2024

ຜົນການວິເຄາະຊີ້ໃຫ້ເຫັນວ່າ: ມູນຄ່າການຄ້າລວມລະຫວ່າງ ສປປ ລາວ ກັບປະເທດໃນອະນຸພາກພື້ນລຸ່ມແມ່ນໍ້າຂອງ ໃນຊ່ວງ 2020–2024 ເຕີບໂຕຕໍ່ເນື່ອງ ໂດຍມີອັດຕາເຕີບໂຕສະເລ່ຍ 13.26% ຕໍ່ປີ. ການເຕີບໂຕນີ້ອາດສະທ້ອນການຟື້ນຕົວຂອງກິດຈະກໍາການຄ້າຫຼັງໄລຍະການລະບາດຂອງພະຍາດໂຄວິດ-19 ແລະ ການເຊື່ອມໂຍງພາຍໃນພາກພື້ນທີ່ດີຂຶ້ນ. ໂດຍພິຈາລະນາດ້ານການເຊື່ອມໂຍງໂຄງລ່າງ, ບົດລາຍງານບາງສ່ວນຊີ້ວ່າ ເສັ້ນທາງລົດໄຟລາວ–ຈີນ ມີສ່ວນຊ່ວຍຫຼຸດຕົ້ນທຶນການຂົນສົ່ງ ແລະ ສົ່ງເສີມການຄ້າຂ້າມແດນ (Mekong Institute, 2023; Lao Trade Portal, 2025). ມຸມມອງນີ້ສອດຄ່ອງກັບງານສຶກສາທີ່ອະທິບາຍວ່າ: ການພັດທະນາໂຄງລ່າງການ

ຂົນສົ່ງ ແລະ ການອໍານວຍຄວາມສະດວກ ຊ່ວຍຫຼຸດຕົ້ນທຶນ ແລະ ກະຕຸ້ນການແລກປ່ຽນທາງການຄ້າ (Stone & Strutt, 2009).

ແນວໃດກໍຕາມ, ເຖິງແມ່ນມູນຄ່າການຄ້າລວມຈະເຕີບໂຕ ແຕ່ໂຄງສ້າງຄູ່ຄ້າຂອງ ສປປ ລາວ ຍັງມີການກະຈຸກຕົວສູງ ໂດຍການຄ້າສ່ວນໃຫຍ່ກະຈຸກຢູ່ໃນ 3 ຕະຫຼາດຫຼັກ ຄື: ໄທ (49.18%), ສປ ຈີນ (33.85%) ແລະ ສສ ຫວຽດນາມ (15.39%) ໃນຂະນະທີ່ ກໍາປູເຈຍ ແລະ ມຽນມາ ມີສັດສ່ວນຕໍ່າຫຼາຍ. ຮູບແບບນີ້ສະທ້ອນວ່າ: ປະເທດຍັງເພິ່ງພາຄູ່ຄ້າຫຼັກສູງ ຊຶ່ງອາດເພີ່ມຄວາມສ່ຽງຈາກປັດໄຈພາຍນອກ ເຊັ່ນ: ການປ່ຽນແປງນະໂຍບາຍ ຫຼື ຄວາມຜັນຜວນເສດຖະກິດໃນປະເທດຄູ່ຄ້າຫຼັກ. ປະເດັນນີ້ສອດຄ່ອງກັບແນວຄິດການກະຈຸກຕົວຂອງຄູ່ຄ້າ ທີ່ຊີ້ວ່າ ການກະຈຸກໃນຕະຫຼາດຈໍານວນຈໍາກັດ ມັກເພີ່ມຄວາມເບາະບາງຕໍ່ຄວາມຜັນຜວນພາຍນອກ (World Bank, 2023) ແລະ ສອດຄ່ອງກັບຜົນການສຶກສາທີ່ຊີ້ວ່າ: ສປປ ລາວມີການເພິ່ງພາການຄ້າກັບ ສປ ຈີນ ໃນລະດັບສໍາຄັນໃນບາງຊ່ວງເວລາ (Sioudomphan, 2022). ພ້ອມກັນນີ້, ຍັງສະແດງໃຫ້ເຫັນວ່າ: ອັດຕາການເຕີບໂຕການຄ້າມີຄວາມແຕກຕ່າງລະຫວ່າງຕະຫຼາດຢ່າງຊັດເຈນ ເຊັ່ນວ່າ ຕະຫຼາດທີ່ມີຖານການຄ້າຕໍ່າ (ມຽນມາ ແລະ ກໍາປູເຈຍ) ອັດຕາເຕີບໂຕສູງ ເນື່ອງຈາກຜົນຂອງຖານຕໍ່າ, ໃນຂະນະທີ່ຕະຫຼາດຫຼັກທີ່ມີຂະໜາດໃຫຍ່ ແລະ ຖານການຄ້າສູງ ມີທ່າອ່ຽງການເຕີບໂຕຊ້າກວ່າ ຕາມລັກສະນະຕະຫຼາດທີ່ອີ່ມຕົວ ສອດຄ່ອງກັບງານວິໄຈຂອງ Anderson and van Wincoop (2003) ທີ່ໄດ້ລະບຸວ່າ: ປະລິມານການຄ້າລະຫວ່າງປະເທດຂຶ້ນກັບຂະໜາດເສດຖະກິດ ແລະ ອຸປະສັກການຄ້າ ຊຶ່ງອາດນໍາໄປສູ່ຄວາມແຕກຕ່າງຂອງອັດຕາເຕີບໂຕລະຫວ່າງຕະຫຼາດ.

ໃນມຸມມອງໂຄງສ້າງການຄ້າ ເຫັນວ່າ: ການສົ່ງອອກ ແລະ ນໍາເຂົ້າ ມີທ່າອ່ຽງເພີ່ມຂຶ້ນພ້ອມກັນ ແຕ່ອັດຕາເຕີບໂຕຂອງການນໍາເຂົ້າ (14.84%) ສູງກວ່າການສົ່ງອອກ (12.13%) ສະທ້ອນວ່າ: ການຂະຫຍາຍຕົວຂອງອຸປະສົງໃນປະເທດ ແລະ ການເພິ່ງພາການນໍາເຂົ້າເພື່ອຮອງຮັບການເຕີບໂຕທາງເສດຖະກິດ. ຜົນການວິໄຈນີ້ສອດຄ່ອງກັບ ບົດລາຍງານຂອງ World Bank (2024) ທີ່ລະບຸວ່າ: ເສດຖະກິດລາວມີການເພິ່ງພາການນໍາເຂົ້າສູງ ເມື່ອອຸປະສົງພາຍໃນຟື້ນຕົວ ການນໍາເຂົ້າມັກຂະຫຍາຍຕາມ. ດ້ານໂຄງສ້າງສິນຄ້າ, ການສົ່ງອອກຂອງລາວຍັງເນັ້ນສິນຄ້າອີງຊັບພະຍາກອນ ໂດຍກຸ່ມພະລັງງານກວມສັດສ່ວນສູງສຸດ (34.47%) ໃນຂະນະທີ່ການນໍາເຂົ້າກະຈຸກໃນສິນຄ້າອຸດສາຫະກໍາ (69.01%) ຊຶ່ງສະທ້ອນລັກສະນະ "ສົ່ງອອກຂັ້ນຕົ້ນ–ນໍາເຂົ້າສິນຄ້າທຶນ/ອຸດສາຫະກໍາ" ແລະ ອາດຈໍາກັດການສ້າງມູນຄ່າເພີ່ມໃນໄລຍະຍາວ (Prebisch, 1950; UNCTAD, 2019).

ສໍາລັບດຸນການຄ້າ, ແມ່ນວ່າໂດຍລວມ ສປປ ລາວ ຈະມີສະຖານະເກີນດຸນ (6,281.69 ລ້ານໂດລາ) ແຕ່ດຸນການຄ້າມີຄວາມຜັນຜວນສູງ ແລະ ທ່າອ່ຽງການເຕີບໂຕຂອງດຸນການຄ້າຂະຫຍາຍຕົວໂດຍສະເລ່ຍ. ຄວາມເກີນດຸນສ່ວນໃຫຍ່ມາຈາກການເກີນດຸນກັບ ສສ ຫວຽດນາມ ແລະ ສປ ຈີນ, ແຕ່ຍັງຂາດດຸນກັບ ໄທ ສະທ້ອນການເພິ່ງພາແຫຼ່ງນໍາເຂົ້າຈາກໄທໃນສັດສ່ວນສູງ. ປະເດັນນີ້ ສອດຄ່ອງກັບຜົນການສຶກສາຂອງ IMF (2024) ທີ່ຊີ້ໃຫ້ເຫັນຄວາມເບາະບາງຈາກພາຍນອກ ແລະ ຄວາມສ່ຽງທາງມະຫາພາກ ທີ່ອາດກະທົບຕໍ່ຄວາມຜັນຜວນຂອງດຸນການຄ້າ.

4.2 ວິເຄາະຄວາມໄດ້ປຽບໂດຍປຽບທຽບ ທາງດ້ານການຄ້າ ລະຫວ່າງ ສປປ ລາວ ກັບ ບັນດາປະເທດຄູ່ຄ້າໃນອະນຸພາກພື້ນລຸ່ມແມ່ນໍ້າຂອງ

ຜົນການປະເມີນດັດຊະນີຄວາມໄດ້ປຽບໂດຍປຽບທຽບທາງດ້ານການຄ້າ ລະຫວ່າງ ສປປ ລາວ ກັບ ສປຈີນ ຊີ້ວ່າ: ສປປ ລາວ ມີຄວາມໄດ້ປຽບໃນ 4 ໝວດສິນຄ້າ ໄດ້ແກ່ ແຮ່ທອງ, ໝາກກ້ວຍ, ຢາງພາລາ ແລະ ແປ້ງມັນຕົ້ນ ແຕ່ເສຍປຽບໃນໝວດສິນຄ້າເຍື່ອໄມ້ ແລະ ເສດເຈ້ຍ. ຜົນນີ້ສະທ້ອນເຖິງການແບ່ງບົດບາດໃນການຜະລິດລະຫວ່າງສອງປະເທດ ໂດຍ ສປປ ລາວ ມີຈຸດແຂງໃນສົ່ງອອກສິນຄ້າທີ່ອີງໃສ່ຊັບພະຍາກອນ ໃນຂະນະທີ່ ສປຈີນ ມີຖານອຸດສາຫະກໍາທີ່ເຂັ້ມແຂງກວ່າ. ຮູບແບບນີ້ສອດຄ່ອງກັບທິດສະດີ Heckscher–Ohlin ທີ່ອະທິບາຍວ່າ ປະເທດມັກສົ່ງອອກສິນຄ້າຕາມປັດໄຈການຜະລິດທີ່ຕົນມີຢູ່ຢ່າງອຸດົມສົມບູນ ແລະ ນໍາເຂົ້າສິນຄ້າທີ່ຕົນເອງຂາດແຄນ (Heckscher & Ohlin, 1933) ແລະ ຍັງສອດຄ່ອງກັບທິດສະດີຄວາມໄດ້ປຽບໂດຍປຽບທຽບຂອງ Ricardo (1817) ທີ່ລະບຸວ່າ ປະເທດຈະເນັ້ນການຜະລິດສິນຄ້າທີ່ຕົນມີຕົ້ນທຶນໂອກາດຕໍ່າ ແລະ ແລກປ່ຽນກັບຄູ່ຄ້າໃນການຄ້າສາກົນ ຈະນໍາໄປສູ່ການແບ່ງງານລະຫວ່າງປະເທດ ແລະ ການໃຊ້ຊັບພະຍາກອນໄດ້ຢ່າງມີປະສິດທິພາບ.

ສໍາລັບ ປະເທດໄທ ຜົນການປະເມີນພົບວ່າ: ສປປ ລາວ ມີຄວາມໄດ້ປຽບໃນ 4 ໝວດສິນຄ້າ ຄື: ໄຟຟ້າ, ມັນຕົ້ນ, ຊີມັງ ແລະ ທອງແດງ ແລະ ເຄື່ອງທີ່ເຮັດດ້ວຍທອງແດງ ໃນຂະນະທີ່ເສຍປຽບໃນໝວດສິນຄ້າ ກາເຟ (ທີ່ບໍ່ທັນໄດ້ປຸງແຕ່ງ). ຮູບແບບນີ້ຊີ້ໃຫ້ເຫັນວ່າ: ລາວມີຄວາມໄດ້ປຽບໃນສິນຄ້າພະລັງງານ ແລະ ວັດຖຸດິບ ໃນຂະນະທີ່ສິນຄ້າກະສິກໍາບາງປະເພດຍັງມີຂໍ້ຈໍາກັດດ້ານຜະລິດຕະພາບ ແລະ ມາດຕະຖານການຄ້າ. ຜົນນີ້ສອດຄ່ອງກັບແນວຄິດຕ່ອງໂສ້ມູນຄ່າ ທີ່ຊີ້ວ່າ ຄວາມສາມາດໃນການຍົກລະດັບມູນຄ່າ ມີຜົນຕໍ່ຄວາມໄດ້ປຽບທາງການຄ້າ (UNCTAD, 2019).

ສໍາລັບ ປະເທດ ສສ ຫວຽດນາມ ຜົນການປະເມີນຄວາມໄດ້ປຽບໂດຍປຽບທຽບທາງດ້ານການຄ້າ ສະແດງວ່າ: ສປປ ລາວ ມີຄວາມໄດ້ປຽບໃນທັງ 5 ໝວດສິນຄ້າທີ່ນໍາມາສຶກສາເປັນຕົ້ນແມ່ນ ເຄື່ອງດື່ມ, ຢາງພາລາ, ນໍ້າຕານ, ໄຟຟ້າ ແລະ ແຮ່ເຫຼັກ. ຜົນນີ້ຊີ້ໃຫ້ເຫັນວ່າ ໂຄງສ້າງການຄ້າຂອງທັງສອງຝ່າຍມີລັກສະນະເກື້ອກູນກັນ ລະຫວ່າງສອງປະເທດ ໂດຍ ສປປ ລາວ ສົ່ງອອກວັດຖຸດິບ ໃຫ້ແກ່ ສສ ຫວຽດນາມ

ໃນນາມເປັນປະເທດທີ່ມີຖານການແປຮູບອຸດສາຫະກຳ. ຮູບແບບນີ້ສອດຄ່ອງກັບແນວຄິດການຄ້າແບບສົມບູນກັນ ຊຶ່ງອະທິບາຍວ່າ ຄວາມແຕກຕ່າງຂອງປັດໄຈການຜະລິດ ແລະ ໂຄງສ້າງການຜະລິດ ສົ່ງເສີມໃຫ້ເກີດການຄ້າລະຫວ່າງປະເທດ (Anderson & van Wincoop, 2003)

ໃນກໍລະນີ ປະເທດມຽນມາ ສະແດງໃຫ້ເຫັນວ່າ: ສປປ ລາວ ມີຄວາມໄດ້ປຽບໃນທັງ 5 ໝວດສິນຄ້າ ຄື: ໄຟຟ້າ, ພາຫະນະ ແລະ ຊິ້ນສ່ວນ, ເຫຼັກ–ເຫຼັກກ້າ, ຢາສູບ ແລະ ເຫຼົ້າ–ເບຍ. ທ່າອ່ຽງນີ້ອາດສະທ້ອນຂະໜາດຕະຫຼາດ ແລະ ຖານການຄ້າທີ່ຍັງຈຳກັດ ຈຶ່ງເຮັດໃຫ້ຄ່າດັດຊະນີຄວາມໄດ້ປຽບໂດຍປຽບທຽບສູງ. ຜົນດັ່ງກ່າວສອດຄ່ອງກັບທິດສະດີຂອງ Balassa (1965) ແລະ Vollrath (1991) ທີ່ລະບຸວ່າດັດຊະນີຄວາມໄດ້ປຽບທາງການຄ້າ ອາດໄວຕໍ່ຂະໜາດຕະຫຼາດ ແລະ ໂຄງສ້າງການຄ້າ ເຮັດໃຫ້ປະເທດທີ່ມີຖານການຄ້ານ້ອຍ ປາກົດຄ່າຄວາມໄດ້ປຽບສູງໄດ້.

ສຳລັບ ປະເທດກຳປູເຈຍ ຜົນການປະເມີນຄ່າດັດຊະນີຄວາມໄດ້ປຽບໂດຍປຽບທຽບ ຊີ້ວ່າ: ສປປ ລາວ ມີຄວາມໄດ້ປຽບໃນ ສິນຄ້າໄຟຟ້າ, ກາເຟ (ທີ່ບໍ່ທັນໄດ້ປຸງແຕ່ງ) ແລະ ເຫຼັກ–ເຫຼັກກ້າ ແຕ່ເສຍປຽບໃນສິນຄ້າເຄື່ອງດື່ມ ແລະ ອຸປະກອນກົນຈັກ. ສະທ້ອນວ່າ ສປປ ລາວ ມີຄວາມໄດ້ປຽບໃນສິນຄ້າພະລັງງານ ແລະ ວັດຖຸດິບກະສິກຳ ໃນຂະນະທີ່ກຳປູເຈຍມີບົດບາດຫຼາຍກວ່າໃນສິນຄ້າແປຮູບ ແລະ ສິນຄ້າອຸດສາຫະກຳບາງປະເພດ ຊຶ່ງຜົນການວິເຄາະຊີ້ໃຫ້ເຫັນວ່າ: ຄວາມໄດ້ປຽບໂດຍປຽບທຽບທາງດ້ານການຄ້າລະຫວ່າງປະເທດ ມີລັກສະນະເກື້ອກູນກັນ ຫຼາຍກວ່າການແຂ່ງຂັນໂດຍກົງ ໂດຍລາວເນັ້ນການສົ່ງອອກສິນຄ້າຂັ້ນຕົ້ນ ໃນຂະນະທີ່ກຳປູເຈຍມີສັດສ່ວນສູງກວ່າໃນສິນຄ້າແປຮູບ ແລະ ອຸດສາຫະກຳເບົາ. ຂໍ້ຄົ້ນພົບນີ້ ສອດຄ່ອງກັບທິດສະດີຄວາມໄດ້ປຽບໂດຍປຽບທຽບຂອງ Balassa (1965) ທີ່ລະບຸວ່າແບບແຜນການຄ້າລະຫວ່າງປະເທດ ມັກສະທ້ອນໂຄງສ້າງການຜະລິດ ແລະ ລະດັບການແປຮູບຂອງແຕ່ລະປະເທດ.

## 5. ສະຫຼຸບ

ຜ່ານການວິເຄາະສະພາບການຄ້າ ແລະ ການວິເຄາະຄວາມໄດ້ປຽບໂດຍປຽບທຽບທາງດ້ານການຄ້າ ລະຫວ່າງ ລະຫວ່າງ ສປປ ລາວ ກັບປະເທດໃນອະນຸພາກພື້ນລຸ່ມແມ່ນ້ຳຂອງ ສາມາດສະຫຼຸບໄດ້ວ່າ: ການຄ້າລະຫວ່າງ ສປປ ລາວ ກັບບັນດາປະເທດໃນອະນຸພາກພື້ນລຸ່ມແມ່ນ້ຳຂອງ ໃນຊ່ວງປີ 2020–2024 ມີການຂະຫຍາຍຕົວຢ່າງຕໍ່ເນື່ອງ, ແຕ່ໂຄງສ້າງທາງການຄ້າຍັງມີການກະຈຸກຕົວສູງຢູ່ໃນ 3 ຄູ່ຄ້າຫຼັກເຊັ່ນ: ໄທ, ສປ ຈີນ ແລະ ສສ ຫວຽດນາມ, ໃນຂະນະທີ່ ກຳປູເຈຍ ແລະ ມຽນມາ ມີສັດສ່ວນທີ່ຈຳກັດ ເມື່ອພິຈາລະນາຕາມແຕ່ລະຄູ່ຄ້າພົບວ່າ: ປະເທດທີ່ມີຖານການຄ້າຕ່ຳ ເຊັ່ນ: ມຽນມາ ແລະ ກຳປູເຈຍ ມີອັດຕາການເຕີບໂຕຄ່ອນຂ້າງສູງ, ໃນທາງກົງກັນຂ້າມ ປະເທດທີ່ມີຖານການຄ້າສູງ ເຊັ່ນ: ສປ ຈີນ, ໄທ ແລະ ຫວຽດນາມ ພັດມີອັດຕາການເຕີບໂຕທີ່ຕ່ຳ. ສ່ວນການສົ່ງອອກ ກໍ່ມີການເຕີບໂຕຢ່າງຕໍ່ເນື່ອງ, ແຕ່ຕະຫຼາດສົ່ງອອກຍັງກະຈຸກຕົວຢູ່ໃນ 3 ຕະຫຼາດຫຼັກ ເຊັ່ນ: ໄທ, ສປຈີນ ແລະ ສສ ຫວຽດນາມ. ໂຄງສ້າງສິນຄ້າສົ່ງອອກສ່ວນໃຫຍ່ແມ່ນເພິ່ງພາສິນຄ້າທີ່ອີງໃສ່ຊັບພະຍາກອນ ແລະ ສິນຄ້າຂັ້ນຕົ້ນ ໂດຍພະລັງງານ (ໄຟຟ້າເປັນຫຼັກ) ກວມອັດຕາສ່ວນສູງສຸດ, ຮອງລົງມາແມ່ນສິນຄ້າ ອຸດສາຫະກຳ, ກະສິກຳ ແລະ ແຮ່ທາດ. ສຳລັບການນຳເຂົ້າກໍ່ເຕີບໂຕຢ່າງຕໍ່ເນື່ອງເຊັ່ນດຽວກັນ, ແຕ່ຕະຫຼາດນຳເຂົ້າສ່ວນໃຫຍ່ແມ່ນກະຈຸກຕົວຢູ່ໃນ 2 ຕະຫຼາດຫຼັກ ເຊັ່ນ: ໄທ ແລະ ສປ ຈີນ, ສ່ວນ ສສ ຫວຽດນາມ, ມຽນມາ ແລະ ກຳປູເຈຍມີສັດສ່ວນທີ່ຕ່ຳຫຼາຍ, ໂຄງສ້າງນຳເຂົ້າຍັງເພິ່ງພາສິນຄ້າທຶນ ຫຼື ສິນຄ້າອຸດສາຫະກຳ ເປັນສ່ວນໃຫຍ່, ຮອງລົງມາແມ່ນພະລັງງານ, ກະສິກຳ ແລະ ແຮ່ທາດ. ຕໍ່ກັບດຸນການຄ້າ ໂດຍລວມ ສປປ ລາວ ຢູ່ໃນສະຖານະເກີນດຸນ, ແຕ່ມີຄວາມຜັນຜວນສູງ ແລະ ອັດຕາເຕີບໂຕຂອງດຸນການຄ້າໂດຍສະເລ່ຍມີທ່າອ່ຽງຫຼຸດລົງໃນແຕ່ລະປີ, ເມື່ອພິຈາລະນາຕາມແຕ່ລະປະເທດຄູ່ຄ້າ ເຫັນວ່າ: ສປປ ລາວ ເກີນດຸນ ສສ ຫວຽດນາມ ຫຼາຍທີ່ສຸດ, ຮອງລົງມາແມ່ນ ສປ ຈີນ ແລະ ກຳປູເຈຍ, ແຕ່ຂາດດຸນກັບໄທ ແລະ ມຽນມາ; ສ່ວນການວິເຄາະຄວາມໄດ້ປຽບໂດຍປຽບທຽບທາງດ້ານການຄ້າພົບວ່າ: ໄດ້ປຽບ ສປ ຈີນ ໃນໝວດສິນຄ້າແຮ່ທອງ, ໝາກກ້ວຍ, ຢາງພາລາ ແລະ ແປ້ງມັນຕົ້ນ, ແຕ່ເສຍປຽບໃນ ໝວດສິນຄ້າ ເຍື່ອໄມ້ ແລະ ເສດເຈ້ຍ, ຕໍ່ກັບໄທ ພົບວ່າ: ສປປ ລາວ ໄດ້ປຽບໃນໝວດສິນຄ້າໄຟຟ້າ, ມັນຕົ້ນ, ຊີມັງ, ທອງແດງ ແລະ ເຄື່ອງທີ່ເຮັດດ້ວຍທອງແດງ, ແຕ່ເສຍປຽບໃນໝວດສິນຄ້າກາເຟ (ທີ່ບໍ່ທັນໄດ້ປຸງແຕ່ງ); ສຳລັບ ສສ ຫວຽດນາມ ພົບວ່າ ສປປ ລາວ ໄດ້ປຽບທັງ 5 ສິນຄ້າທີ່ນຳມາສຶກສາ ເຊັ່ນ: ເຄື່ອງດື່ມ, ຢາງພາລາ, ນ້ຳຕານ , ໄຟຟ້າ ແລະ ແຮ່ເຫຼັກ; ໃນກໍລະນີກັບມຽນມາ ພົບວ່າ ສປປ ລາວ ໄດ້ປຽບທັງ 5 ໝວດສິນຄ້າທີ່ນຳມາສຶກສາ ເຊັ່ນ: ໄຟຟ້າ, ພາຫະນະ/ຊິ້ນສ່ວນ, ເຫຼັກ–ເຫຼັກກ້າ, ຢາສູບ , ເຫຼົ້າ–ເບຍ ແລະ ສຳລັບກຳປູເຈຍ ພົບວ່າ ສປປ ລາວໄດ້ປຽບໃນ 3 ໝວດສິນຄ້າ ຄື: ໄຟຟ້າ, ກາເຟດິບ, ເຫຼັກ–ເຫຼັກກ້າ; ແຕ່ເສຍປຽບໃນໝວດສິນຄ້າເຄື່ອງດື່ມ ແລະ ເຄື່ອງຈັກ-ສ່ວນປະກອບ.

## 6. ຢັ້ງຢືນຄວາມຖືກຕ້ອງ

ພວກຂ້າພະເຈົ້າໃນນາມທີມງານຄົ້ນຄວ້າວິທະຍາສາດ ຂໍປະຕິຍານຕົນວ່າ ຂໍ້ມູນທັງໝົດທີ່ມີໃນບົດຄວາມວິຊາການດັ່ງກ່າວນີ້ແມ່ນບໍ່ມີຂໍ້ຂັດແຍ່ງທາງຜົນປະໂຫຍດກັບພາກສ່ວນໃດ ແລະ ບໍ່ໄດ້ເອື້ອປະໂຫຍດໃຫ້ກັບພາກສ່ວນໃດພາກສ່ວນໜຶ່ງ, ກໍລະນີມີການລະເມີດໃນຮູບການໃດໜຶ່ງ ຂ້າພະເຈົ້າມີຄວາມຍິນດີ ທີ່ຈະຮັບຜິດຊອບແຕ່ພຽງຜູ້ດຽວ.

## 7. ເອກະສານອ້າງອີງ


ADB. (2022). *Greater Mekong Subregion Economic Cooperation Program Strategic Framework 2030.* Asian Development Bank, Manila.

Anderson, J. E., & van Wincoop, E. (2003). Gravity with gravitas: A solution to the border puzzle. *American Economic Review, 93*(1), 170–192.

Balassa, B. (1965). Trade liberalisation and revealed comparative advantage. *The Manchester School, 33*(2), 99–123.

Heckscher, E., & Ohlin, B. (1933). *Interregional and international trade.* Harvard University Press.

International Monetary Fund. (2024). *Lao People's Democratic Republic: Article IV consultation report.* IMF.

Lao Trade Portal. (2024). *Import and Export Statistics of Lao PDR 2020-2023.* Ministry of Industry and Commerce. http://www.laotradeportal.gov.la. (Accessed March 20, 2026).

Mekong Institute. (2023). *Cross-border trade facilitation and logistics connectivity in the Greater Mekong Sub-region.* Mekong Institute.

Ministry of Planning and Investment .(2021). *The 9th Five-Year National Socio-Economic Development Plan (2021-2025*), Vientiane.

Prebisch, R. (1950). *The economic development of Latin America and its principal problems.* United Nations.

Ricardo, D. (1817). *On the principles of political economy and taxation.* John Murray.

Sioudomphan, S. (2022). Trade dependence between Lao PDR and China during COVID-19 period. *Souphanouvong University Journal Multidisciplinary Research and Development, 5*(2), 45–60.

Stone, S., & Strutt, A. (2009). *Transport infrastructure and trade facilitation in the Greater Mekong Sub-region* (ADBI Working Paper No. 130). Asian Development Bank Institute.

United Nations Conference on Trade and Development. (2013). *Trade and development report 2013: Adjusting to the changing dynamics of the world economy.*

United Nations Conference on Trade and Development. (2019). *Trade and development report 2019: Financing a global green new deal.* UNCTAD.

Vollrath, T. L., 1991. A theoretical evaluation of alternative trade intensity measures of revealed comparative advantage. Weltwirtschaftliches Archiv. 127 (2): 265-280.

World Bank. (2020). *From Landlocked to Land-linked: Unlocking the Potential of Lao-China Rail Connectivity.* World Bank Group, Washington, DC.

World Bank. (2023). *World development indicators: Trade concentration index.* World Bank.

World Bank. (2024). *Lao economic monitor: Addressing macroeconomic vulnerabilities.* World Bank.

World Trade Organization. (2014). *World trade report 2014: Trade and development—Recent trends and the role of the WTO.*